- ແມ່ ຊຸ ຣີ ສາ ເພື່ອຮູ
- PA - ວຣນທ
14/12
ຮັບຊາບ
14/12/15

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 1290
ວັນທີ 14/12/15
ໂທລະສັບ 021 217770

ເລກທີ: 47 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 8 ທັນວາ 2015

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 16/11/2015 ຫາ 20/11/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງຕົວເລກຜົນຜະລິດຂອງ ສ.ອາເມລິກາ ເພີ່ມຂຶ້ນ 0,4% ໃນເດືອນ 10/2015 ຈາກຫຼຸດລົງ 0,1% ໃນເດືອນຜ່ານມາ ແລະ ຕົວເລກເງິນທຶນໄຫຼເຂົ້າສຸດທິໃນຕະຫຼາດທຶນ ແລະ ຕະຫຼາດຮຸ້ນ ຂອງ ສ.ອາເມລິກາ ເພີ່ມຂຶ້ນເປັນ 33,6 ຕື້ໂດລາ ໃນເດືອນ 9/2015 ຈາກ 20,8 ຕື້ໂດລາ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 10/11/2015 | ອາທິດນີ້ 17/11/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0749 | 1,0661 | 0,82% |
| ໂດລາ/ເຢນ | 123,20 | 123,32 | -0,10% |
| ໂດລາ/ບາດ | 35,87 | 35,96 | -0,24% |
| ໂດລາ/ເປໂຊ | 47,23 | 47,14 | 0,18% |
| ໂດລາ/ຣູເປັຍ | 13.610,11 | 13.732,11 | -0,89% |
| ໂດລາ/ໂດລາສິງກະໂປ | 1,4219 | 1,4228 | -0,06% |
| ໂດລາ/ຢວນ | 6,3600 | 6,3742 | -0,22% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 5,54% ຈາກ 45,31 ໂດລາ/ບາເຣວ ມາເປັນ 42,80 ໂດລາ/ບາເຣວ ຍ້ອນປະລິມານການສະໜອງນ້ຳມັນທີ່ຍັງສູງ ທຽບໃສ່ຄວາມຕ້ອງການໃນໄລຍະຜ່ານມາ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,06% ຈາກ 1.092,41 ໂດລາ/ອອນ ມາເປັນ 1.080,86 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,005% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,08% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,12% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 1,36% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 1,01% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,03% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 8,32% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 9,80% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 10/11/2015 | | | ອາທິດນີ້ 17/11/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.139,43 | 8.173,96 | 8.159,88 | 8.146,65 | 8.180,64 | 8.160,25 | -0,09% | -0,08% | -0,005% |
| ບາດ | 227,60 | 229,08 | 228,46 | 228,49 | 228,83 | 228,75 | -0,39% | 0,11% | -0,12% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.143,65 | 8.233,47 | 8.188,56 | 8.149,52 | 8.240,80 | 8.195,16 | -0,07% | -0,09% | -0,08% |
| ບາດ | 229,63 | 234,90 | 232,26 | 228,59 | 229,69 | 229,14 | 0,45% | 2,27% | 1,36% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,05% | 0,73% | 0,35% | 0,04% | 0,74% | 0,43% | | | |
| ບາດ | 0,89% | 2,54% | 1,66% | 0,04% | 0,37% | 0,17% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,14% ທຽບໃສ່ວັນທີ 13/11/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,54%;
- ປະລິມານເງິນ M2 ຫຼຸດລົງ 0,30% ເມື່ອທຽບໃສ່ວັນທີ 13/11/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 21,17%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 16/11/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 70,49 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 116,35 ລ້ານໂດລາ ແລະ ຂາຍໂດລາໄດ້ 45,86 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.576,19 ລ້ານບາດ (ໃນນີ້ ຊື້ບາດໄດ້ 250,13 ລ້ານບາດ ແລະ ຂາຍ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ບາດໄດ້ 1.826,31 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 55,27% ແລະ ເພີ່ມຂຶ້ນ 11,97% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 1,65 ລ້ານໂດລາ ແລະ ເງິນບາດມີຈໍານວນ 32 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 30,50 ລ້ານໂດລາ ແຕ່ຊື້ບາດສຸດທິແມ່ນຄົງທີ່;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 25,51 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 820,47 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 03/11/2015 | | ອາທິດທີ 09/11/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 17,79 | 155,63 | 11,71 | 156,56 | -34,18% | 0,60% |
| - ທ/ຄທຸລະກິດອື່ນໆ | 45,15 | 84,98 | 104,64 | 93,56 | 131,77% | 10,11% |
| ລວມຊື້: | **62,93** | **240,60** | **116,35** | **250,13** | **84,87%** | **3,96%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,83 | 139,62 | 19,65 | 133,97 | 24,09% | -4,05% |
| - ທ/ຄທຸລະກິດອື່ນໆ | 25,70 | 1.474,29 | 26,21 | 1.692,34 | 1,98% | 14,79% |
| ລວມຂາຍ: | **41,53** | **1.613,91** | **45,86** | **1.826,31** | **10,41%** | **13,16%** |
| ຊື້-ຂາຍສຸດທິ ທທກ | **21,40** | **-1.373,31** | **70,49** | **-1.576,19** | **229,37%** | **14,77%** |
| ຜິດດ່ຽງ ຊື້-ຂາຍ | 34,00 | -570,77 | 60,59 | -630,16 | 265,05% | -593,07% |
| ມູນຄ່າການຊື້-ຂາຍ | **104,47** | **1.854,51** | **162,20** | **2,076,44** | **55,27%** | **11,97%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 4,66 | 6,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 11,49 | 6,00 | 30,50 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-6,83** | **0,00** | **-30,50** | **0,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **0,55** | **23,20** | **1,65** | **32,00** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,24 | 2.163,95 | 0,27 | 820,47 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 63,36 | 0,00 | 25,79 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-63,12** | **2.163,95** | **-25,51** | **820,47** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 11/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,39% ເພີ່ມຂຶ້ນ 0,07% ຈາກ 1,32% ໃນເດືອນ 10/2015 ຍ້ອນລາຄາໝາກໄມ້, ຜັກສົດ, ປະເພດອາຫານສຸກ ແລະ ໝວດທີ່ພັກອາໄສ ຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເນື່ອງຈາກເປັນໄລຍະຂອງການໃຊ້ຈ່າຍງານສະເຫຼີມສະຫຼອງບຸນປະເພນີຕ່າງໆ.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 144,95 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 6,4% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 775 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 0,12% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 600,41 ຕື້ກີບ ເພີ່ມຂຶ້ນ 0,36% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-19/11/2015) ມີຈຳນວນ 1.861 ຄັ້ງ ໂດຍມີມູນຄ່າ 674,60 ຕື້ກີບ ເພີ່ມຂຶ້ນ 1,46% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 459 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.234,38 ຈຸດ ຫຼຸດລົງ 2,44% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 528.280 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,26 ຕື້ກີບ ເພີ່ມຂຶ້ນ 74,42% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 60,13% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.531 ກີບ/ຮຸ້ນ ຫຼຸດລົງ 20 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 23.782 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 131,54 ລ້ານກີບ ຫຼຸດລົງ 91,94% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 64,94% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,77%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.202 ກີບ/ຮຸ້ນ ຫຼຸດລົງ 9 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 499.286 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,09 ຕື້ກີບ ເພີ່ມຂຶ້ນ 3.828,91% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 62,18% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,82%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ 7.301 ກີບ/ຮຸ້ນ ຫຼຸດລົງ 399 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.012 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 36,59 ລ້ານກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 10% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.800 ກີບ/ຮຸ້ນ ຫຼຸດລົງ 103 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,56 ລ້ານກີບ ຫຼຸດລົງ 99,65%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 20,25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ່ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ່ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສໍາເລັດການຮັບຮອງ ຄໍາສັ່ງວ່າດ້ວຍ ການກັກ, ການຍຶດ ຫຼື ອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສໍາເລັດການເຂົ້າຮ່ວມປະຊຸມ ແລະ ສໍາມະນາ: ❶ກອງປະຊຸມສຸດຍອດລະດັບພາກພື້ນ ເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ ເມືອງຊິດນີ ປະເທດອົດສະຕາຣີ; ❷ສໍາມະນາ ໃນຫົວຂໍ້: "Joint APG/Egmont Group Seminar for FIUs" ແລະ "2015 APG Typologies and Capacity Building Workshop" ທີ່ປະເທດເນປານ, ❸ກອງປະຊຸມເປີດກວ້າງຜ່ານຮ່າງຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການລະບົບຊໍາລະມູນຄ່າສູງ RTGS ທີ່ ທຫລ, ❹ກອງປະຊຸມຄະນະກໍາມະການການເປີດເສລີ ການບໍລິການທາງດ້ານການເງິນ ທີ່ປະເທດມາເລເຊຍ;
- ສໍາເລັດການປະສານກັບ ທະນາຄານກາງປະເທດ ມາເລເຊຍ ກ່ຽວກັບເຂົ້າຮ່ວມກອງປະຊຸມໃນຫົວຂໍ້: "Effective Management of Rick in MSB Industry" ທີ່ປະເທດມາເລເຊຍ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈໍານວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດໍາລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ, ❹ຄົ້ນຄວ້າກ່ຽວກັບ ການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກໍາລັງ ທີ່ເດີນທາດຫຼວງ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ເຊັນ ແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

M. N. [signature]

ບະຄອນສີ ມະໂນທັມ